ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 1177 /ກຈພງ

ນະຄອນຫຼວງວຽງຈັນ,ວັນທີ 23 NOV 2016

## ແຈ້ງການ

### ເລື່ອງ: ປະກາດຮັບສະໝັກສອບເສັງລັດຖະກອນໃໝ່ ປີ 2017.

ກົມຈັດຕັ້ງ ແລະ ພະນັກງານ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາທ່ານ ທີ່ມີຄວາມສົນໃຈສະໝັກເຂົ້າເຮັດວຽກ ຢູ່ກະຊວງອຸດສາຫະກຳ ແລະ ການຄ້າ ຕາມຕົວເລກລັດຖະກອນໃໝ່ ແບ່ງປັນໃຫ້ບັນດາກົມ ປີ 2017 ຕາມມາດຖານເງື່ອນໄຂ ດັ່ງລຸ່ມນີ້:

**1. ຫ້ອງການກະຊວງ:** ຈຳນວນ 01 ຕຳແໜ່ງ.

- ວິຊາຮຽນ: ຄຸ້ມຄອງເສດຖະກິດ ແລະ ບໍລິຫານລັດ.
- ລະດັບປະລິນຍາຕີຂຶ້ນໄປ.

**2. ກົມກວດກາ:** ຈຳນວນ 01 ຕຳແໜ່ງ.

- ວິຊາຮຽນ: ກົດໝາຍທຸລະກິດ ຫລື ຄຸ້ມຄອງເສດຖະກິດ.
- ລະດັບປະລິນຍາຕີຂຶ້ນໄປ.
- ມາດຖານອື່ນໆ: ຮູ້ພາສາໃດໜຶ່ງໃນລະດັບກາງຂຶ້ນໄປ ແລະ ຮູ້ນຳໃຊ້ຄອມພິວເຕີໃນລະດັບດີ.

**3. ກົມອຸດສາຫະກຳ ແລະ ຫັດຖະກຳ:** ຈຳນວນ 01 ຕຳແໜ່ງ.

- ວິຊາຮຽນ: ບໍລິຫານອຸດສາຫະກຳປຸງແຕ່ງ ຫລື ກົນຈັກ, ເຄມີສາດ.
- ລະດັບປະລິນຍາຕີຂຶ້ນໄປ.
- ມາດຖານອື່ນໆ: ຮູ້ພາສາອັງກິດ, ພາສາຫວຽດນາມ, ພາສາຈີນ ແລະ ສາມາດນຳໃຊ້ຄອມພິວເຕີ.

**4. ກົມການຄ້າພາຍໃນ:** ຈຳນວນ 02 ຕຳແໜ່ງ.

- ວິຊາຮຽນ: ເສດຖະກິດການຄ້າ (ຖ້າຮຽນຈົບວິຊາການຄ້າພາຍໃນ ຍິ່ງເປັນການດີ), ກົດໝາຍເສດຖະກິດ.
- ລະດັບປະລິນຍາຕີຂຶ້ນໄປ.

**5. ກົມການນຳເຂົ້າ ແລະ ສົ່ງອອກ:** ຈຳນວນ 01 ຕຳແໜ່ງ.

- ວິຊາຮຽນ: ການຄ້າຕ່າງປະເທດ ຫລື ສາຂາເສດຖະສາດ.
- ລະດັບປະລິນຍາຕີຂຶ້ນໄປ.
- ມາດຖານອື່ນໆ: ຮູ້ພາສາອັງກິດໃນລະດັບດີ (ສາມາດເວົ້າ, ອ່ານ, ຟັງ, ຂຽນ) ຈະພິຈາລະນາເປັນພິເສດ.

**6. ກົມສົ່ງເສີມການຄ້າ:** ຈຳນວນ 01 ຕຳແໜ່ງ.

- ວິຊາຮຽນ: ການຕະຫລາດ, ບໍລິຫານທຸລະກິດ.

- ລະດັບປະລິນຍາຕີຂຶ້ນໄປ.

- ມາດຖານອື່ນໆ: ສາມາດເວົ້າພາສາອັງກິດ, ພາສາຈີນ ສາມາດປະສານພົວພັນວຽກງານກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ.

7. ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ: ຈຳນວນ 01 ຕຳແໜ່ງ.

- ວິຊາຮຽນ: ວິສະວະກຳໂຮງງານ.

- ລະດັບປະລິນຍາຕີຂຶ້ນໄປ.

- ມາດຖານອື່ນໆ: ຮູ້ພາສາອັງກິດໃນລະດັບດີ (ສາມາດເວົ້າ, ອ່ານ, ຟັງ, ຂຽນ) ແລະ ສາມາດນຳໃຊ້ຄອມພິວເຕີ (Microsoft Office, Internet...) ໃນລະດັບດີ.

8. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ: ຈຳນວນ 01 ຕຳແໜ່ງ.

- ວິຊາຮຽນ: ກົດໝາຍ ຫລື ກົດໝາຍວ່າດ້ວຍທຸລະກິດ.

- ລະດັບປະລິນຍາຕີຂຶ້ນໄປ.

9. ສະຖາບັນຄົ້ນຄວ້າເສດຖະກິດ, ອຸດສາຫະກຳ ແລະ ການຄ້າ: ຈຳນວນ 01 ຕຳແໜ່ງ.

- ວິຊາຮຽນ: ເສດຖະສາດ, ບໍລິຫານການສຶກສາ.

- ລະດັບປະລິນຍາຕີຂຶ້ນໄປ.

10. ກົມແຜນການ ແລະ ການຮ່ວມມື: ຈຳນວນ 02 ຕຳແໜ່ງ.

- ວິຊາຮຽນ: ບັນຊີ, ການຄ້າສາກົນ.

- ລະດັບປະລິນຍາຕີຂຶ້ນໄປ.

11. ກົມນະໂຍບາຍການຄ້າຕ່າງປະເທດ: ຈຳນວນ 01 ຕຳແໜ່ງ.

- ວິຊາຮຽນ: ການຄ້າຕ່າງປະເທດ.

- ລະດັບປະລິນຍາໂທຂຶ້ນໄປ.

* ໝາຍເຫດ:

- ທ່ານໃດສົນໃຈ ເຊີນຕິດຕໍ່ຮັບສຳນວນຄຳຮ້ອງສອບເສັງ ທີ່ກົມຈັດຕັ້ງ ແລະ ພະນັກງານ ກະຊວງອຸດສາຫະກຳ ແລະ ການຄ້າ ຊັ້ນ III ໂທລະສັບ 021 416139.

- ເປີດຈຳໜ່າຍ ແລະ ຮັບຄຳຮ້ອງສະໝັກເຂົ້າສອບເສັງ ວັນທີ 23-28 ພະຈິກ 2016 ຕາມວັນລັດຖະການ, ເວລາ 08:30 ໂມງ - 15:30 ໂມງ, ໃນລາຄາ 20.000 ກີບ/ຊຸດ.

- ປິດຮັບໃບຄຳຮ້ອງເຂົ້າສອບເສັງ ວັນທີ 29 ພະຈິກ 2016 ເວລາ 11:30 ໂມງ.

- ຄະນະກຳມະການແຕ່ລະກົມ ດຳເນີນການຄັດເລືອກຟອມ ວັນທີ 30 ພະຈິກ 2016.

- ຟອມໃດທີ່ໄດ້ຮັບການຄັດເລືອກ ກົມກ່ຽວຂ້ອງຈະພົວພັນຫາຜູ້ກ່ຽວ ເພື່ອເຂົ້າມາສອບເສັງ.

- ດຳເນີນການສອບເສັງ ວັນທີ 5 ທັນວາ 2016 ຢູ່ຫ້ອງປະຊຸມໃຫຍ່ ຊັ້ນ 1 ກະຊວງອຸດສາຫະກຳ ແລະ ການຄ້າ ເວລາ 09:00 ໂມງ - 11:00 ໂມງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ຫົວໜ້າກົມ

ນ ຈັນສຸກ ແສງພະຈັນ